ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 135 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 07 ທັນວາ 2021

# ຂໍ້ຕົກລົງ

## ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບກະກຽມແຜນເປີດປະເທດ ເພື່ອຕ້ອນຮັບນັກທ່ອງທ່ຽວ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບປັບປຸງ ສະບັບເລກທີ 04/ສພຊ, ລົງວັນທີ 8 ພະຈິກ 2016.
- ອີງຕາມ ຂໍ້ຕົກລົງວ່າດ້ວຍລະບຽບການ ແລະ ກົນໄກການເຮັດວຽກຂອງລັດຖະບານ ຊຸດທີ IX ສະບັບເລກທີ 41/ນຍ, ລົງວັນທີ 30 ມັງກອນ 2021.
- ອີງຕາມ ແຈ້ງການ ທິດຊີ້ນຳ ກ່ຽວກັບການນຳເຂົ້ານັກທ່ອງທ່ຽວທີ່ໄດ້ຮັບວັກຊີນແລ້ວ (Vaccinated Travel) ແລະ ແຜນທົດລອງນຳເຂົ້ານັກທ່ອງທ່ຽວຕ່າງປະເທດ (ສ.ເກົາຫຼີ) ໃນລາຍການກິລາຕີກອຟ ເຂົ້າມາ ສປປ ລາວ ຂອງຫ້ອງວ່າການສຳນັກງານນາຍົກລັດຖະຕີ ສະບັບເລກທີ 1445/ຫສນຍ, ລົງວັນທີ 05 ພະຈິກ 2021.

### ນາຍົກລັດຖະມົນຕີ ຕົກລົງ:

ມາດຕາ 1: ແຕ່ງຕັ້ງຄະນະຮັບຜິດຊອບ ກະກຽມແຜນເປີດປະເທດ ເພື່ອຕ້ອນຮັບນັກທ່ອງທ່ຽວ ປະກອບມີດັ່ງນີ້:

I. ຄະນະຮັບຜິດຊອບນຳພາ-ຊີ້ນຳລວມ ປະກອບມີຄື:

1. ທ່ານ ສຈ. ປອ ກິແກ້ວ ໄຂຄຳພິທູນ, ຮອງນາຍົກລັດຖະມົນຕີ, ຫົວໜ້າຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດໂຄວິດ-19 ເປັນຫົວໜ້າຄະນະຊີ້ນຳລວມ;
2. ທ່ານ ນາງ ສວນສະຫວັນ ວິຍະເກດ, ລັດຖະມົນຕີ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຮອງ;
3. ທ່ານ ປອ ດຣ. ບຸນແຝງ ພູມມະໄລສິດ, ລັດຖະມົນຕີ ກະຊວງສາທາລະນະສຸກ ເປັນຮອງ;
4. ທ່ານ ບຸນເຫຼືອ ພັນດານຸວົງ, ຮອງລັດຖະມົນຕີ ກະຊວງການຕ່າງປະເທດ ເປັນຮອງ;
5. ທ່ານ ປອ. ບຸນເຫຼືອ ສິນໄຊວໍຣະວົງ, ຮອງລັດຖະມົນຕີ ກະຊວງການເງິນ ເປັນຮອງ;
6. ທ່ານ ບຸນເຖິງ ດວງສະຫວັນ, ຮອງລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຮອງ;
7. ທ່ານ ລັນ ແສງອາພອນ, ຮອງລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຄະນະ;
8. ທ່ານ ປອ. ສັນຕິສຸກ ສິມມາລາວົງ, ຮອງລັດຖະມົນຕີ ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນຄະນະ;
9. ທ່ານ ພົນຕີ ປອ. ບົວວັນ ວົງສາວັນທອງ, ຫົວໜ້າກົມໃຫຍ່ສັນຕິບານ, ກະຊວງປ້ອງກັນຄວາມສະຫງົບ ເປັນຄະນະ;
10. ທ່ານ ອຸເດດ ສຸວັນນະວົງ, ປະທານ ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ເປັນຄະນະ.



สแกนด้วย CamScanner

ໜ້າທີ່ຂອງຄະນະຊີ້ນຳລວມ ມີດັ່ງນີ້:

- ຊີ້ນຳຄະນະວິຊາການໃນຂົງເຂດຄວາມຮັບຜິດຊອບຂອງຕົນ ຄົ້ນຄວ້າ ກຳນົດນະໂຍບາຍ, ມາດຕະການ, ເຕັກນິກ ແລະ ວິທີການຈັດຕັ້ງປະຕິບັດໃນການກະກຽມເປີດປະເທດ ເພື່ອຕ້ອນຮັບນັກທ່ອງທ່ຽວ ດັ່ງນີ້:
  1. ດ້ານລະບຽບການເຂົ້າ-ອອກເມືອງ;
  2. ດ້ານການຕິດຕາມການເດີນທາງຂອງນັກທ່ອງທ່ຽວ ໂດຍນຳໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານທີ່ທັນສະໄໝ;
  3. ດ້ານການປ້ອງກັນ, ຄວບຄຸມ ແລະ ແກ້ໄຂ ການລະບາດຂອງເຊື້ອພະຍາດໂຄວິດ-19;
  4. ດ້ານການສະໜອງງົບປະມານ ແລະ ການຈັດເກັບລາຍຮັບຈາກການທ່ອງທ່ຽວ;
  5. ດ້ານການເດີນທາງ, ກິນຢູ່, ພັກເຊົາ ຂອງນັກທ່ອງທ່ຽວພາຍໃນປະເທດ;
  6. ດ້ານການກຳນົດລາຍການທ່ອງທ່ຽວ, ສິນຄ້າ ແລະ ການບໍລິການປິ່ນອ້ອມລາຍການທ່ອງທ່ຽວ;
  7. ດ້ານການຮັກສາຄວາມສະຫງົບ, ປອດໄພຂອງນັກທ່ອງທ່ຽວ ແລະ ປະຊາຊົນທ້ອງຖິ່ນ.
- ພິຈາລະນາສະເໜີລັດຖະບານ ອະນຸຍາດໃຫ້ນັກທ່ອງທ່ຽວປະເທດຕ່າງໆເຂົ້າມາ ສປປ ລາວ ໃນແຕ່ລະໄລຍະ;
- ພິຈາລະນາ ແຜນການເປີດປະເທດເພື່ອຕ້ອນຮັບນັກທ່ອງທ່ຽວ ຕາມການສະເໜີຂອງກອງເລຂາ;
- ຮັບຮອງ ແລະ ປະກາດແຜນການເປີດປະເທດ ເພື່ອຕ້ອນຮັບນັກທ່ອງທ່ຽວໃນແຕ່ລະບາດກ້າວ ໃຫ້ມີປະສິດທິພາບ ແລະ ມີຄວາມປອດໄພສູງ;
- ອອກຂໍ້ຕົກລົງແຕ່ງຕັ້ງຄະນະຮັບຊອບ ແລະ ລະບຽບການ ໃນການເຄື່ອນໄຫວຈັດຕັ້ງປະຕິບັດຕົວຈິງເພີ່ມເຕີມ ຕາມວຽກງານຕົວຈິງຂອງພາກສ່ວນກ່ຽວຂ້ອງ.

II. ຄະນະກອງເລຂາ ກະກຽມແຜນເປີດປະເທດ ເພື່ອຕ້ອນຮັບນັກທ່ອງທ່ຽວ ປະກອບມີຄື:

1. ທ່ານ ອຸ່ນທອງ ຂາວພັນ, ຮອງລັດຖະມົນຕີ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຫົວໜ້າ;
2. ທ່ານ ນາງ ແພງຈັນ ແພງເມືອງ, ຫົວໜ້າກົມແຜນການ ແລະ ການຮ່ວມມືສາກົນ, ກະຊວງ ຖວທ ເປັນຮອງ;
3. ທ່ານ ດຣ. ລັດຕະນະໄຊ ເພັດສຸວັນ, ຫົວໜ້າກົມຄວບຄຸມພະຍາດຕິດຕໍ່ , ກະຊວງສາທາລະນະສຸກ ເປັນຮອງ;
4. ທ່ານ ສີພັນດອນ ອ້ອຍບົວບຸດດີ, ຫົວໜ້າກົມກົງສຸນ, ກະຊວງການຕ່າງປະເທດ ເປັນຄະນະ;
5. ທ່ານ ບົວໄລ ພານຸວົງ, ຫົວໜ້າຫ້ອງການ ກະຊວງ ຖວທ ເປັນຄະນະ;
6. ທ່ານ ນາງ ດາລານີ ພົມມະວົງສາ, ຫົວໜ້າກົມຄຸ້ມຄອງການທ່ອງທ່ຽວ, ກະຊວງ ຖວທ ເປັນຄະນະ;
7. ທ່ານ ນາງ ພອນມະລີ ອິນທະພົມ, ຫົວໜ້າກົມພັດທະນາການທ່ອງທ່ຽວ, ກະຊວງ ຖວທ ເປັນຄະນະ;
8. ທ່ານ ຄົມ ດວງຈັນທາ, ຫົວໜ້າກົມໂຄສະນາການທ່ອງທ່ຽວ, ກະຊວງ ຖວທ ເປັນຄະນະ;
9. ທ່ານ ສົມສະຫວາດ ພົງສາ, ຫົວໜ້າກົມສື່ມວນຊົນ, ກະຊວງ ຖວທ ເປັນຄະນະ;
10. ທ່ານ ພູວຽງ ພົງສາ, ຫົວໜ້າກົມແຜນການ ແລະ ການຮ່ວມມື, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຄະນະ;
11. ທ່ານ ພັນເອກ ສາຍສະໜິງ ສີວິໄລ, ຫົວໜ້າກົມຕຳຫຼວດກວດຄົນ ເຂົ້າ-ອອກເມືອງ, ກະຊວງປ້ອງກັນຄວາມສະຫງົບ ເປັນຄະນະ;



สแกนด้วย CamScanner

12. ທ່ານ ປອ. ທະວີສັກ ມະໂນທັມ, ຫົວໜ້າສູນບໍລິຫານລັດດ້ວຍເອເລັກໂຕຼນິກ, ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນຄະນະ;

13. ທ່ານ ວຽງໄຊ ສີງຄຳ, ຫົວໜ້າກົມການບິນພົນລະເຮືອນ, ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຄະນະ;

14. ທ່ານ ປອ. ບຸນຕາ ອ່ອນນາວົງ, ຫົວໜ້າກົມຂົນສົ່ງ, ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຄະນະ;

15. ທ່ານ ພັນເອກ ຄິດທະວົງ ສຸລິຍາ, ຫົວໜ້າກົມຕຳຫລວດທ່ອງທ່ຽວ, ກະຊວງປ້ອງກັນຄວາມສະຫງົບ ເປັນຄະນະ;

16. ທ່ານ ວິເລດ ກິນນະວົງ, ຮອງຫົວໜ້າກົມສ່ວຍສາອາກອນ, ກະຊວງການເງິນ ເປັນຄະນະ;

17. ທ່ານ ຄຳມິດ ໄຊອາສາ, ຮອງຫົວໜ້າກົມພາສີ, ກະຊວງການເງິນ ເປັນຄະນະ;

18. ທ່ານ ນາງ ສີພົງ ອຸນາວົງ, ຮອງຫົວໜ້າກົມນະໂຍບາຍການເງິນ, ກະຊວງການເງິນ ເປັນຄະນະ;

19. ທ່ານ ອິນທີ ເດືອນສະຫວັນ, ຄະນະບໍລິຫານງານ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ເປັນຄະນະ.

ໜ້າທີ່ຂອງຄະນະກອງເລຂາ ມີດັ່ງນີ້:

- ຄົ້ນຄວ້າສ້າງແຜນລວມຢ່າງລະອຽດ ຈັດກອງປະຊຸມປຶກສາຫາລື ກຳນົດນະໂຍບາຍ, ມາດຕະການ, ເຕັກນິກ ແລະ ວິທີການຈັດຕັ້ງປະຕິບັດ ສຳລັບການເປີດປະເທດ ເພື່ອຕ້ອນຮັບນັກທ່ອງທ່ຽວ;
- ນຳສະເໜີແຜນການເປີດປະເທດ ເພື່ອຂໍການຮັບຮອງຈາກຄະນະຊີ້ນຳລວມ;
- ປະສານສົມທົບ, ຈັດຕັ້ງປະຕິບັດ, ສະຫລຸບຖອດຖອນບົດຮຽນ ແລະ ລາຍງານ ຂໍທິດຊີ້ນຳ ເປັນແຕ່ລະໄລຍະ.

ມາດຕາ 2: ມອບໃຫ້ບັນດາກະຊວງ, ກົມກ່ຽວຂ້ອງ ແລະ ບັນດາທ່ານທີ່ຖືກແຕ່ງຕັ້ງ ຈົ່ງຮັບຮູ້ ແລະ ປະຕິບັດຕາມຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ ແລະ ມີປະສິດທິຜົນສູງ.

ມາດຕາ 3: ງົບປະມານສຳລັບຈັດຕັ້ງປະຕິບັດ ແຜນການເປີດປະເທດ ເພື່ອຕ້ອນຮັບນັກທ່ອງທ່ຽວ ໃຫ້ນຳໃຊ້ງົບປະມານຂອງລັດຖະບານ ສົມທົບກັບບັນດາໂຄງການ ແລະ ອົງການຈັດຕັ້ງຕ່າງໆ ເພື່ອລະດົມການສະໜັບສະໜູນ.

ມາດຕາ 4: ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ພັນຄຳ ວິພາວັນ



สแกนด้วย CamScanner